# ຂຸມຊັບ

"ທຸກວັນນີ້ຜູ້ຄົນໃນເມືອງລາວຍັງບໍ່ລືມ ຕື່ນອົກຕື່ນໃຈຕໍ່ການຂຸດຄົ້ນພົບວັດຖຸໂບຮານທີ່ແຂວງຕ່າງ ໆ ແລະອື່ນ ໆ ຂ້າພຣະເຈົ້າຢາກໃຫ້ທ່ານໄດ້ຂຸດພົບສິ່ງປະເສີດເໝືອນກັນແດ່ ເພາະຖ້າຜູ້ໃດຂຸດພົບສິ່ງນີ້ຜູ້ນັ້ນຈະບໍ່ເຫັນອັນໃດມີຄ່າມະຫາສານດັ່ງນີ້."

"ແຜ່ນດິນສະຫວັນເປັນເໝືອນດັ່ງສິ່ງຂອງແພງທີ່ເຊື່ອງໄວ້ໃນທົ່ງນາທີ່ທ່ານຜູ້ນຶ່ງເມື່ອໄດ້ພົບແລ້ວໄດ້ອຳໄວ້ ແລະເພາະຄວາມຍິນດີຈຶ່ງໄປຂາຍສັບພະສິ່ງທີ່ຕົນມີຢູ່ແລ້ວໄປຊື້ນານັ້ນ" (ມັດທາຍ ບົດທີ່ 13:44)

"ແຜ່ນດິນສະຫວັນ" ເປັນຂຸມຊັບປະເສີດແທ້ຈິງເນື້ອແທ້ຂອງ "ແຜ່ນດິນສະຫວັນ" ຄື "ສະຫວັນ" ເຊິ່ງໝາຍເຖິງອົງ "ພຣະເຈົ້າ" ນັ້ນເອງ.

ແທ້ຈິງກໍເປັນຕາມເຫດຜົນ ເພາະ "ສະຫວັນ" ກັບ "ພຣະເຈົ້າ" ແຍກອອກຈາກກັນບໍ່ໄດ້ ພຣະເຈົ້າຢູ່ທີ່ໃດທີ່ນັ້ນກໍເປັນສະຫວັນ ທີ່ໃດຈະເປັນສະຫວັນໂດຍບໍ່ມີພຣະເຈົ້າຢູ່ກໍເປັນອັນວ່າບໍ່ໄດ້ ສະຫວັນກັບພຣະເຈົ້າແຍກກັນບໍ່ອອກເໝືອນພຣະເຈົ້າກັບພຣະເຢຊູ ພຣະເຢຊູຊົງຢູ່ໃນພຣະເຈົ້າ.

"ຂຸມຊັບ" ຄືສິ່ງມີຄ່າຂອງໂລກຫຼືສິ່ງມີຄ່າທາງວິຍານຈິດ "ທົ່ງນາ" ໝາຍເຖິງທີ່ສຳຫຼັບປູກເຂົ້າ ແຕ່ພຣະເຢຊູນຳເອົາມາໃຊ້ຝ່າຍວິນຍານຈິດເຊິ່ງໝາຍເຖິງການເຜີຍແຜ່ຂ່າວປະເສີດເລື່ອງພຣະອົງ.

ໃນຕ່າງປະເທດມີຫຼາຍບ່ອນໃຕ້ດິນເປັນຂຸມຊັບຍິ່ງໃຫຍ່ຄືບໍ່ນ້ຳມັນແດ່ ບໍ່ຄຳແດ່ ຢູເຣນຽມແດ່ ເຊິ່ງໃຜເປັນເຈົ້າຂອງທີ່ດິນນັ້ນຈະປ່ຽນສະພາບຈາກການເປັນຊາວນາຍາກຈົນມາເປັນມະຫາເສດຖີ.

ເມື່ອເຮົາໄດ້ຊາບຄຳວ່າ "ສະຫວັນຂຸມຊັບແລະທົ່ງນາ" ມີຄວາມໝາຍຢ່າງໃດແລ້ວເຮົາກໍຊາບໄດ້ບາດດຽວວ່າຄຳປຽບຂອງພຣະເຢຊູຕອນນີ້ໝາຍຄວາມວ່າຢ່າງໃດ ກໍຄືພຣະເຢຊູເຈົ້າເປັນຂຸມຊັບທີ່ເຊິ່ງຢູ່ໃນຂ່າວປະເສີດເລື່ອງພຣະອົງ.

ເປັນຫຍັງຄົນສ່ວນຫຼາຍຈຶ່ງເບິ່ງຂ່າວປະເສີດເລື່ອງພຣະເຢຊູເຈົ້າດ້ວຍຄວາມຮູ້ສຶກເສີຍ ໆ ບໍ່ເຫັນຄ່າກໍເພາະເຂົາເບິ່ງຂ່າວປະເສີດນັ້ນເໝືອນຄົນເບິ່ງທົ່ງນາທີ່ເຫັນແຕ່ຕົ້ນຫຍ້າຕົ້ນເຂົ້າ ສ່ວນຄົນທີ່ເບິ່ງຂ່າວປະເສີດແລ້ວເຫັນອົງພຣະເຢຊູເຈົ້າຜູ້ປະເສີດ ເຫັນພຣະເຈົ້າເຊື່ອງຢູ່ ເຫັນການໄຖ່ບາບ ແລະຮີບຮ້ອນເອົາຂ່າວປະເສີດເລື່ອງພຣະອົງດ້ວຍຄວາມຕື່ນເຕັ້ນແລະດີອົກດີໃຈທີ່ສຸດ ເຂົາກໍເໝືອນຄົນທີ່ເບິ່ງທົ່ງນາບໍ່ເຫັນຈຳເພາະຕົ້ນຫຍ້າຕົ້ນເຂົ້າ ແຕ່ເຫັນຂຸມຊັບເຊື່ອງຢູ່ໃນທົ່ງນານັ້ນດ້ວຍ ແລ້ວຮີບໄປຂາຍຊັບຂອງຕົນເທົ່າໃດເທົ່າກັນ ລວມເອົາເງິນມາຊື້ດິນໃໝ່ນີ້ໃຫ້ໄດ້ ເພາະເຫັນແກ່ຂຸມຊັບທີ່ເຊື່ອງຢູ່ໃຕ້ພື້ນ ຄົນທີ່ເຫັນຂ່າວປະເສີດເລື່ອງພຣະເຢຊູເຈົ້າຢ່າງທີ່ເຫັນອົງພຣະຜູ້ໄຖ່ບາບເຊື່ອງຢູ່ໃນຂ່າວປະເສີດນັ້ນກໍດັ່ງດຽວກັນ ເຂົາຈະຮັບຂ່າວປະເສີດນັ້ນໄວ້ຢ່າງບໍ່ຖ້າ ພ້ອມທັງອົງພຣະເຢຊູແຫ່ງຂ່າວປະເສີດນັ້ນດ້ວຍ ແມ່ນຈະຕ້ອງຂາຍອັນໃດກໍຍອມຂາຍໝົດ ຂໍແຕ່ໃຫ້ໄດ້ພຣະເຢຊູໄວ້ກໍພໍໃຈແລ້ວ ບາງຄົນຕ້ອງຍອມຂາຍຊື່ສຽງກຽດຕິຍົດຝ່າຍໂລກ.

ຄົນສ່ວນຫຼາຍຈາກປະເທດທົ່ວໂລກ ໄດ້ເຫັນພຣະເຢຊູເປັນຂຸມຊັບທີ່ເຊື່ອງຢູ່ໃນຂ່າວປະເສີດແລ້ວຮີບຮັບເອົາມີຄົນຢ່າງນີ້ທຸກຊາດທຸກພາສາບໍ່ວ່າຈະຍ່າງເຂົ້າໄປໃນປະເທດໃດນ້ອຍຫຼືໃຫຍ່ຈະໄດ້ພົບຄົນທີ່ເຊື່ອງພຣະເຢຊູໄວ້ໃນຊ່ວງອົກຂອງເຂົາເປັນຄົນທີ່ຂາຍຊັບເກົ່າເອົາມາຊື້ດິນໃໝ່ ຄືຂ່າວປະເສີດເລື່ອງພຣະເຢຊູທີ່ມີຊັບມະຫາສານເຊື່ອງຢູ່ ນີ້ເອງທີ່ຂ້າພຣະເຈົ້າເຫັນຄວາມໝາຍທາງໜຶ່ງໃນ ພຣະທຳມັດທາຍ ບົດທີ່ 13:44.

ທ່ານພີ່ນ້ອງທັງຫຼາຍທ່ານເບິ່ງຂ່າວປະເສີດເລື່ອງພຣະເຢຊູເຈົ້າ ເໝືອນຄົນເບິ່ງທົ່ງໄຮ່ທົ່ງນາປະເພດໃດ ທ່ານເບິ່ງຂ່າວປະເສີດຢ່າງທີ່ເປັນຄຳສອນໃຫ້ຄົນດີເທົ່ານັ້ນ ເໝືອນຢ່າງທີ່ມີໃນສາສນາອື່ນ ໆ ຢ່າງນັ້ນຫຼື ຖ້າຢ່າງນັ້ນທ່ານຈະເບິ່ງໄດ້ບໍ່ດີກວ່າຄົນທີ່ເບິ່ງທົ່ງນາເຫັນແຕ່ຕົ້ນຫຍ້າຕົ້ນເຂົ້າບໍ່ມີອັນໃດປະຫຼາດບໍ່ມີອັນໃດດີກວ່າກັນ ແຕ່ຖ້າທ່ານເບິ່ງເຫັນຂຸມຊັບເຊື່ອງຢູ່ທ່ານຈະເຫັນສະຫວັນເຫັນພຣະເຢຊູເຫັນພຣະເຈົ້າເຫັນຊີວິດອັນຕລອດໄປເຊື່ອງຢູ່ໃນຂ່າວປະເສີດນັ້ນແລະທ່ານກໍຈະຮັບເອົາໂດຍບໍ່ຊ້າບໍ່ແມ່ນຕີ້.

ຂໍເຊີນທ່ານຕື່ນເຕັ້ນພິຈາລະນາຄວາມຈິງຂອງພຣະເຈົ້າແລະຮັບເອົາແຕ່ບັດນີ້ເທີນກ່ອນທີ່ຈະສວາຍເສຍເວລາໄປ.